ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

# ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ ກ່ຽວກັບການສ້າງຕັ້ງ ແລະ ການແຈ້ງຂຶ້ນທະບຽນວິສາຫະກິດເພື່ອເຄື່ອນໄຫວດຳເນີນ ທຸລະກິດຢູ່ ສ ປ ປ ລາວ, ນອນໃນ 4ປະເພດ, 3ຮູບການ, 4ຮູບແບບ, ການປະກອບເອກະສານ ແລະ ຄ່າແບບຟອມມີດັ່ງນີ້:




| ຈຳນວນຜູ້ສ້າງຕັ້ງ | 1 ຄົນ | 2 ຄົນຂຶ້ນໄປ... | 2 ຄົນຂຶ້ນໄປ... | 1 ຄົນ | 2 ຄົນເຖິງ 30 ຄົນ | 9 ຄົນ...ຂຶ້ນໄປ... | ຂຶ້ນກັບການອະນຸມັດຕົກລົງ ຂອງຂະແໜງການເງິນ | ຂຶ້ນກັບການອະນຸມັດຕົກລົງຂອງຂະແໜງການເງິນ |
|---|---|---|---|---|---|---|---|---|
| ຜູ້ປະກອບທຶນ | ຜູ້ດຽວເປັນຜູ້ສ້າງຕັ້ງ | ຂາຮຸ້ນ | ຂາຮຸ້ນ | ຜູ້ຖືຮຸ້ນ | ຜູ້ຖືຮຸ້ນ | ຜູ້ຖືຮຸ້ນ | ຜູ້ຖືຮຸ້ນ | ຜູ້ຖືຮຸ້ນ |
| ທຶນຈົດທະບຽນ(ທຶນປະກອບ) | ເງິນ, ວັດຖຸ | ເງິນ, ວັດຖຸ ຫຼື ແຮງງານ | ເງິນ, ວັດຖຸ ຫຼື ແຮງງານ | ເງິນ ຫຼື ວັດຖຸ | ເງິນ ຫຼື ວັດຖຸ | ເງິນ ຫຼື ວັດຖຸ | ເງິນ ຫຼື ວັດຖຸ | ເງິນ ຫຼື ວັດຖຸ |
| ເງື່ອນໄຂການຖອກຮຸ້ນ | ຕ້ອງມີຈິງໃນວັນສ້າງຕັ້ງ | ຕ້ອງຖອກຄົບກ່ອນຂຶ້ນທະບຽນ | ຂຶ້ນກັບການຕົກລົງຂອງຂາຮຸ້ນ | ຕ້ອງຖອກຄົບກ່ອນຂຶ້ນທະບຽນ | ວັດຖຸຖອກຄົບ;ເປັນເງິນຖອກກ່ອນ 70% | ຖອກຄົບໃນວັນສ້າງຕັ້ງ | ຖອກຄົບກ່ອນ 5 ວັນກ່ອນວັນສ້າງຕັ້ງ | ວັດຖຸຖອກຄົບ, ເປັນເງິນຖອກກ່ອນ 50% |
| ຮັບຜິດຊອບຕໍ່ໜີ້ສິນ | ບໍ່ຈຳກັດ | ບໍ່ຈຳກັດ | ຂາຮຸ້ນທົ່ວໄປ (ບໍ່ຈຳກັດ), ຂາຮຸ້ນຈຳກັດ (ບໍ່ເກີນມູນຄ່າຮຸ້ນທີ່ບໍ່ທັນຖອກເຕັມ) | ບໍ່ເກີນມູນຄ່າທຶນຈົດທະບຽນ | ບໍ່ເກີນມູນຄ່າຮຸ້ນ ທີ່ບໍ່ທັນຖອກເຕັມ | ບໍ່ເກີນມູນຄ່າຮຸ້ນ ທີ່ບໍ່ທັນຖອກເຕັມ | ບໍ່ເກີນມູນຄ່າຮຸ້ນ ທີ່ບໍ່ທັນຖອກເຕັມ | ບໍ່ເກີນມູນຄ່າຮຸ້ນ ທີ່ບໍ່ທັນຖອກເຕັມ |
| ຜູ້ບໍລິຫານ(ຜູ້ຈັດການ) | ເຈົ້າຂອງວິສາຫະກິດ, ຜູ້ຈັດການ | ຜູ້ຈັດການ | ຜູ້ຈັດການ | ຜູ້ຈັດການ | ຜູ້ອຳນວຍການ | ຜູ້ອຳນວຍການ | ຜູ້ອຳນວຍການ | ຜູ້ອຳນວຍການ |
| ໃບຮຸ້ນ | ບໍ່ມີຮຸ້ນ | ບໍ່ສາມາດປ່ຽນມືໄດ້ | ບໍ່ສາມາດປ່ຽນມືໄດ້ | ປ່ຽນມືບໍ່ໄດ້, ຖອນບໍ່ໄດ້; ແຕ່ໂອນໄດ້ ສືບທອດໄດ້ | ໂອນໄດ້ | ປ່ຽນມືໄດ້ | ປ່ຽນມືໄດ້ | ໂອນໄດ້ |
| ມູນຄ່າຮຸ້ນ | ບໍ່ມີຮຸ້ນ | ບໍ່ມີມູນຄ່າເທົ່າກັນ | ບໍ່ມີມູນຄ່າເທົ່າກັນ | ມີມູນຄ່າເທົ່າກັນ | ມີມູນຄ່າເທົ່າກັນ(ຕ່ຳສຸດ 2.000ກີບ) | ມີມູນຄ່າເທົ່າກັນ | ມີມູນຄ່າເທົ່າກັນ (ບໍ່ໃຫ້ສູງກວ່າ100.000.ກີບ) | ມູນຄ່າເທົ່າກັນ(ບໍ່ໃຫ້ສູງກວ່າ100.000ກີບ) |

★ ຄ່າແບບຟອມແຈ້ງຂຶ້ນທະບຽນວິສາຫະກິດມີດັ່ງນີ້:

| ລ/ດ | ລາຍການ | ວ/ກ ສ່ວນບຸກຄົນ | ວ/ກ ຮຸ້ນສ່ວນແລະບໍລິສັດ |
|---|---|---|---|
| 1 | ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ | 10.000. ກີບ. | 10.000. ກີບ. |
| 2 | ໃບສະເໜີຈອງຊື່ | | 10.000. ກີບ |
| 3 | ສັນຍາສ້າງຕັ້ງ | | 10.000. ກີບ |
| 4 | ກົດລະບຽບ | | 30.000. ກີບ |
| 5 | ຄ່າພິມໃບທະບຽນວິສາຫະກິດ | 30.000. ກີບ | 30.000. ກີບ |
| | ລວມທັງໝົດ: | 40.000. ກີບ | 90.000. ກີບ |

★ ໃບຮັບຮອງຊື່ວິສາຫະກິດອອກໃຫ້ເພື່ອບໍ່ໃຫ້ມີຊື່ວິສາຫະກິດຊ້ຳຊ້ອນກັນ ໃນຂອບເຂດແຂວງ ຫຼື ນະຄອນ ສຳລັບວິສາຫະກິດສ່ວນບຸກຄົນຖ້າມີຜະລິດຕະພັນ (ຈະມີເຄື່ອງໝາຍການຄ້າ) ຫຼື ການບໍລິການທີ່ຢາກໄດ້ຊື່ເປັນຂອງວິສາຫະກິດເອງກໍ່ສາມາດຈອງຊື່ໄດ້ຕາມລະບຽບການ.

## ຄວາມໝາຍເລກລະຫັດຫຍໍ້(Code)ຢູ່ໃນໃບທະບຽນວິສາຫະກິດ.

ກຳນົດລະຫັດແຂວງ, ນະຄອນຫຼວງ, ລຳດັບຜູ້ຖືທະບຽນ, ປະເພດ, ຮູບການ,ຮູບແບບ ປະເພດການລົງທຶນ ແລະ ກິດຈະການທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຕາມການຈັດແບ່ງຂະແໜງການອຸດສາຫະກຳ ມາດຕະຖານສາກົນຕາມລະຫັດ ISIC (International Standard Industrial Classification)(Code )

## ຄວາມໝາຍເລກລະຫັດທະບຽນວິສາຫະກິດ(Code)




## ການແຈ້ງຂຶ້ນທະບຽນວິສາຫະກິດ




## ອະທິບາຍເພີ່ມເຕີມ ກ່ຽວກັບການແຈ້ງຂຶ້ນທະບຽນວິສາຫະກິດ ແລະ ການນຳໃຊ້ທະບຽນວິສາຫະກິດ

+ ພາຍຫຼັງໄດ້ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດແລ້ວ ເຈົ້າໜ້າທີ່ທະບຽນວິສາຫະກິດຈະກວດເບິ່ງກິດຈະການດຳເນີນທຸລະກິດຄື: ຖ້າບໍ່ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ "ຫຈທ" ຈະຂຶ້ນທະບຽນວິສາຫະກິດໃຫ້ສຳເລັດພາຍໃນ 10 ວັນລັດຖະການ ຖ້າຢູ່ໃນບັນຊີປະເພດທຸລະກິດຄວບຄຸມ "ຫຈທ" ຈະສົ່ງໃຫ້ຂະແໜງການກ່ຽວຂ້ອງໃນທັນໃດ ເພື່ອໃຫ້ຂະແໜງການດັ່ງກ່າວ ຄົ້ນຄວ້າມີຄຳເຫັນໃນການສ້າງຕັ້ງວິສາຫະກິດພາຍໃນ 10 ວັນລັດຖະການ, ຖ້າໄດ້ຮັບຄຳຕອບເຫັນດີ "ຫຈທ" ຈະຂຶ້ນທະບຽນວິສາຫະກິດໃຫ້ສຳເລັດພາຍໃນ 3 ວັນລັດຖະການ,ຖ້າບໍ່ເຫັນດີ "ຫຈທ" ກໍ່ຈະຕອບໃຫ້ຜູ້ສະເໜີພາຍໃນ 3 ວັນ.
+ ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຜູ້ຖືທະບຽນວິສາຫະກິດຕ້ອງເອົາໃຈໃສ່ດັ່ງນີ້:

1. ຕ້ອງຂຶ້ນທະບຽນອາກອນນຳຂະແໜງການເງິນແລະຂໍໃບອະນຸຍາດຄວັດກາປະທັບນຳ "ຫຈທ" ບ່ອນທີ່ອອກທະບຽນວິສາຫະກິດ ແລະ ຂໍອະນຸຍາດຄວັດກາປະທັບນຳຂະແໜງປ້ອງກັນຄວາມສະຫງົບ.
2. ຕ້ອງຂຶ້ນປ້າຍ,ຂຽນຊື່ວິສາຫະກິດ ໃຫ້ຖືກຕ້ອງຕາມໃບທະບຽນວິສາຫະກິດ, ຈຸດທີ່ຕັ້ງ, ເລກທີ່, ວັນທີ, ເດືອນ, ປີ ຂຶ້ນທະບຽນວິສາຫະກິດ ໃຫ້ສຳເລັດພາຍໃນ 20ວັນ. ການບໍ່ຂຶ້ນປ້າຍ ຫຼື ການໃຊ້ຊື່ວິສາຫະກິດທີ່ບໍ່ຖືກຕ້ອງ ຫຼື ເປັນຊື່ທີ່ເກືອດຫ້າມ, ການບໍ່ປົດປ້າຍວິສາຫະກິດພາຍຫຼັງຖືກຍຸບເລີກ, ບໍ່ປະຕິບັດຕາມລະບຽບກົດໝາຍກຳນົດ ໃນເບື້ອງຕົ້ນຈະຖືກສຶກສາອົບຮົມ, ແນະນຳຕັກເຕືອນກ່ອນ, ຖ້າບໍ່ປະຕິບັດຈະຖືກປັບໃໝຕາມລະບຽບກົດໝາຍ ຄື: ບໍ່ຂຶ້ນປ້າຍ200.000 ກີບຕໍ່ຄັ້ງ;ໃສ່ຊື່ທີ່ເກືອດຫ້າມ300.000 ກີບ, ບໍ່ປົດປ້າຍ500.000 ກີບ.
   – ປ້າຍຂອງ ບໍລິສັດລັດ, ບໍລິສັດປະສົມ ຫຼື ຫ້າງຮ້ານຂອງລັດ: ພື້ນປ້າຍເປັນສີຂາວ,ໂຕໜັງສືສີແດງ (ຂຶ້ນປ້າຍວິສາຫະກິດສະເພາະ)
   – ປ້າຍວິສາຫະກິດສ່ວນບຸກຄົນ, ວິສາຫະກິດຮຸ້ນສ່ວນ, ບໍລິສັດ: ພື້ນປ້າຍເປັນສີເຫຼືອງ,ໂຕໜັງສືສີແດງ (ຂຶ້ນປ້າຍວິສາຫະກິດສະເພາະ)
3. ຖ້າການດຳເນີນທຸລະກິດປະເພດໃດທີ່ຂະແໜງການກ່ຽວຂ້ອງກຳນົດ ໃຫ້ຂໍອະນຸຍາດກ່ອນການເຄື່ອນໄຫວດຳເນີນທຸລະກິດຕ້ອງໄດ້ຂໍອະນຸຍາດນຳຂະແໜງການນັ້ນກ່ອນ ຈຶ່ງເຄື່ອນໄຫວດຳເນີນທຸລະກິດໄດ້ຕາມລະບຽບການ.
4. ຕ້ອງລາຍງານຜົນການເຄື່ອນໄຫວດຳເນີນທຸລະກິດພາຍໃນ 90 ວັນ ຫຼື ຖ້າເກີນ 12ເດືອນກໍ່ໃຫ້ມາແຈ້ງເຫດຜົນ ໃຫ້ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດຊາບ.
5. ຖ້າຫາກການເຄື່ອນໄຫວຂອງຫົວໜ່ວຍທຸລະກິດໃດບໍ່ສອດຄ່ອງຕາມລະບຽບການ ຈະຖືກປະຕິບັດວິໄນຕາມມາດຕາ 236;237;238; 240;241;242 ແລະ 243 ຂອງກົດໝາຍວ່າດ້ວຍວິສາຫະກິດ.

ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ "ຫຈທ" ມີທີ່ຕັ້ງຢູ່ ພະແນກອຸດສາຫະກຳແລະການຄ້າແຂວງທົ່ວປະເທດ;ຢູ່ນະຄອນຫລວງວຽງຈັນ ຕັ້ງຢູ່:ກະຊວງອຸດສາຫະກຳແລະການຄ້າ ທີ່ຢູ່:ບ້ານ ໂພນໄຊ,ເມືອງໄຊເສດຖາ,ນະຄອນຫລວງວຽງຈັນ ໂທລະສັບ:021 412011;ແຟັກ:021 453865; www.ero.gov.la;E-mail:ero@ero.gov.la

ສະບັບປັບປຸງຄັ້ງທີ 1

International Finance Corporation
World Bank Group